ກະຊວງວິທະຍາສາດແລະເຕັກໂນໂລຊີ
ສະບຽນຮັບ
ເລກທີ - 1797 ກວຕ
ລົງວັນທີ 05 SEP 2014
ເວລາ - 1410
ສົ່ງເຖິງ.........

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 290/ນຍ

ນະຄອນຫຼວງວຽງຈັນ, ວັນທີ 2.9.2014

# ດຳລັດ

## ວ່າດ້ວຍການສ້າງຕັ້ງສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 135/ພນ, ລົງວັນທີ 15 ພຶດສະພາ 2014.

## ນາຍົກລັດຖະມົນຕີ ອອກດຳລັດ

ມາດຕາ 1 ອະນຸມັດສ້າງຕັ້ງສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ ມີຖານະເທົ່າກົມ ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍການຍົກຖານະສູນຝຶກອົບຮົມວິຊາຊີບລາວ-ເກົາຫຼີ ໃນປະຈຸບັນຂຶ້ນເປັນຖານະດັ່ງກ່າວ.

ມາດຕາ 2 ມອບໃຫ້ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນດັ່ງກ່າວ ແລະ ປັບປຸງພາລະບົດບາດຂອງກົມພັດທະນາສີມືແຮງງານ ແລະ ຈັດຫາງານ ໃຫ້ມີຄວາມຮັດກຸມ ແລະ ມີປະສິດທິຜົນສູງ.

ມາດຕາ 3 ຫ້ອງວ່າການລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫຼວງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 4 ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ